**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ກະຊວງສາທາລະນະສຸກ

ເລກທີ 0201 /ສທ

ນະຄອນຫຼວງວຽງຈັນ, ວັນທີ 15 FEB 2018

# ໜັງສືແຈ້ງການ

ເຖິງ: ທ່ານ ຫົວໜ້າພະແນກສາທາລະນະສຸກ ແຂວງ, ນະຄອນຫຼວງ ໃນທົ່ວປະເທດ

ເລື່ອງ: ໃຫ້ກວດກາຄືນບັນດາ ຫ້ອງກວດພະຍາດເອກະຊົນ, ໂຮງໝໍເອກະຊົນ, ໂຮງງານຜະລິດຢາ ແລະ ຮ້ານຂາຍຢາ ອຸປະກອນການແພດ ທຸກແຫ່ງ.

- ອີງຕາມ ກົດໝາຍວ່າດ້ວຍການປິ່ນປົວ ເລກທີ 58/ສພຊ, ລົງວັນທີ 24 ທັນວາ 2014
- ອີງຕາມ ດຳລັດວ່າດ້ວຍໂຮງໝໍເອກະຊົນ ເລກທີ 151/ລບ, ລົງວັນທີ 28 ເມສາ 2014
- ອີງຕາມ ຄຳແນະນຳການຈັດຕັ້ງປະຕິບັດດຳລັດໂຮງໝໍເອກະຊົນ ເລກທີ 1333/ສທ, ລົງວັນທີ 16 ພະຈິກ 2017
- ອີງຕາມ ຂໍ້ຕົກລົງວ່າດ້ວຍການຄຸ້ມຄອງແລະການເຄື່ອນໄຫວຂອງຫ້ອງກວດພະຍາດເອກະຊົນ ເລກທີ 2313/ສທ, ລົງວັນທີ 13 ຕຸລາ 2017
- ອີງຕາມ ກົດໝາຍວ່າດ້ວຍຢາ ແລະ ຜະລິດຕະພັນການແພດ ເລກທີ 07/ສພຊ, ລົງວັນທີ 21/12/2011
- ອີງຕາມ ຂໍ້ຕົກລົງວ່າດ້ວຍການສ້າງຕັ້ງບໍລິສັດດຳເນີນທຸລະກິດ ດ້ານຢາ ແລະ ຜະລິດຕະພັນການແພດ ເລກທີ 1820/ສທ, ລົງວັນທີ 25/08/2017
- ອີງຕາມ ຂໍ້ຕົກລົງວ່າດ້ວຍຮ້ານຂາຍຢາຍ່ອຍ ເລກທີ 2922/ສທ, ລົງວັນທີ 21/09/2016
- ອີງຕາມ ຂໍ້ຕົກລົງວ່າດ້ວຍການຄຸ້ມຄອງການໂຄສະນາ ອາຫານ, ຢາ ແລະ ຜະລິດຕະພັນການແພດ ເລກທີ 1494/ສທ, ລົງວັນທີ 06/07/2016
- ອີງຕາມ ຂໍ້ກຳນົດວ່າດ້ວຍການຂຶ້ນທະບຽນຢາ ເລກທີ 1441/ກຊສ, ລົງວັນທີ 13/08/2003.

ເພື່ອໃຫ້ຫ້ອງກວດພະຍາດເອກະຊົນ, ໂຮງໝໍເອກະຊົນ, ໂຮງງານຜະລິດຢາ ແລະ ຮ້ານຂາຍຢາ-ອຸປະກອນການແພດ ດຳເນີນທຸລະກິດໃຫ້ຖືກຕ້ອງ ຕາມ ກົດໝາຍ, ດຳລັດ ແລະ ຂໍ້ຕົກລົງຕ່າງໆ ຂ້າງເທິງ, ເພື່ອຮັບປະກັນຄຸນນະພາບຂອງການບໍລິການ ແລະ ຄວາມປອດໄພຂອງປະຊາຊົນບັນດາເຜົ່າໃນທົ່ວປະເທດ.

ກະຊວງສາທາລະນະສຸກ ຂໍແຈ້ງມາຍັງຫົວໜ້າພະແນກສາທາລະນະສຸກແຂວງ, ນະຄອນຫຼວງ ໃນທົ່ວປະເທດ ຊາບວ່າ: ເນື່ອງຈາກວ່າໃນໄລຍະຜ່ານມາໄດ້ມີຫ້ອງກວດພະຍາດເອກະຊົນ, ໂຮງໝໍເອກະຊົນ, ຮ້ານຂາຍຍ່ອຍຢາ, ໂຮງງານຜະລິດຢາ-ອຸປະກອນການແພດ, ບໍລິສັດຂາອອກ-ຂາເຂົ້າ ແລະ ບໍລິສັດຂາຍຍົກພາຍໃນ ດ້ານຢາ ແລະ ຜະລິດຕະພັນການແພດ ຈຳນວນໜຶ່ງ ຍັງເຄື່ອນໄຫວບໍ່ຖືກຕ້ອງ ຕາມ ລະບຽບ, ຂໍ້ກຳນົດ ແລະ ກົດໝາຍ ຂອງ ກະຊວງສາທາລະນະສຸກວາງອອກ. ດັ່ງນັ້ນ, ສະເໜີມາຍັງທ່ານແຕ່ງຕັ້ງທີມງານວິຊາການ ລົງກວດກາການດຳເນີນທຸລະກິດຂອງພາກສ່ວນຕ່າງໆ, ດັ່ງນີ້ :

1. ສຳລັບຜູ້ທີ່ບໍ່ໄດ້ຮັບໃບອະນຸຍາດຈາກກະຊວງສາທາລະນະສຸກ ມີການເປີດບໍລິການຫ້ອງກວດພະຍາດເອກະຊົນ, ຄລີນິກ, ໂຮງໝໍເອກະຊົນ, ຮ້ານຂາຍຢາ ລວມທັງ ຜູ້ທີ່ບໍ່ໄດ້ສະເໜີ ແລະ ຜູ້ທີ່ກຳລັງສະເໜີຂໍອະນຸຍາດ ໃຫ້ປິດການບໍລິການກ່ອນ ລໍຖ້າດຳເນີນຂັ້ນຕອນເອກະສານຖືກຕ້ອງຕາມລະບຽບກົດໝາຍ.
2. ສຳລັບຜູ້ທີ່ໄດ້ຮັບອະນຸຍາດຈາກກະຊວງສາທາລະນະສຸກ, ໃຫ້ກວດຄືນການເຄື່ອນໄຫວບໍລິການວ່າຖືກຕ້ອງຕາມໃບອະນຸຍາດ ແລະ ວິຊາຊີບທີ່ໄດ້ຮັບອະນຸຍາດຫຼືບໍ່ເຊັ່ນ: ໃຫ້ປິ່ນປົວທົ່ວໄປແຕ່ໄປເຄື່ອນໄຫວປະສູດ-ພະຍາດຍິງ, ອະນຸຍາດໃຫ້ເຄື່ອນໄຫວປະສູດພະຍາດຍິງ ແຕ່ໄປເຮັດການປະສົມພັນທຽມໃນພາວະມີລູກຍາກ, ອະນຸຍາດໃຫ້ເປີດນອກໂມງການແຕ່ພັດເປີດໃນໂມງການ, ມີການຂະຫຍາຍສາຂາໂຮງໝໍເອກະຊົນຢູ່ນອກສະຖານທີ່ເຮັດຄືກັບຫ້ອງກວດເຂດນອກ ໂດຍບໍ່ໄດ້ຮັບອະນຸຍາດ ແລະ ອື່ນໆ,

ຖ້າກວດພົບໃຫ້ກ່າວເຕືອນ, ຂຽນບົດບັນທຶກຮ່ວມກັນ ແລະ ໃຫ້ຢຸດຕິການເຄື່ອນໄຫວທີ່ບໍ່ຖືກຕ້ອງ, ຖ້າກວດພົບຄັ້ງຕໍ່ໄປຍັງດຳເນີນກິດຈະການ ທີ່ບໍ່ຖືກຕ້ອງ ໃຫ້ປິດກິດຈະການ ແລະ ປະຕິບັດວິໄນຕາມກົດໝາຍ.

3. ສຳລັບຜູ້ທີ່ໄດ້ເອົາໃບອະນຸຍາດສ້າງຕັ້ງຫ້ອງກວດພະຍາດເອກະຊົນຂອງຕົນເອງໃຫ້ຄົນອື່ນເຊົ່າ, ຮ່ວມທຶນ, ຮ່ວມວິຊາການ ແລະ ອື່ນໆ ຫຼື ໃນກໍລະນີເຈົ້າຂອງຫ້ອງກວດພະຍາດເສຍຊີວິດ ໃຫ້ໂຈະການບໍລິການກ່ອນ ລໍຖ້າດຳເນີນຂັ້ນຕອນເອກະສານຖືກຕ້ອງຕາມລະບຽບການ.

4. ສຳລັບຜູ້ທີ່ໄດ້ຮັບອະນຸຍາດຖືກຕ້ອງ ມີການໂຄສະນາເກີນຄວາມເປັນຈິງດ້ວຍຮູບການຕ່າງໆ, ຕົບແຕ່ງສະຖານທີ່ບໍລິການປິ່ນປົວ, ຈັດວາງປ້າຍໂຄສະນາ ທີ່ມີລັກສະນະການຄ້າ, ລົງເຄື່ອນໄຫວໂຄສະນາຢູ່ຊຸມຊົນ ໃຫ້ຢຸດຕິການໂຄສະນາ ແລະ ປົດປ້າຍລົງ, ໃຫ້ແນະນຳ-ກ່າວເຕືອນ ພ້ອມເຮັດບົດບັນທຶກ, ຖ້າກວດພົບຄັ້ງຕໍ່ໄປ ໃຫ້ສັ່ງປິດກິດຈະການທັນທີ.

5. ສຳລັບຜູ້ທີ່ນຳເຂົ້າອຸປະກອນ, ຢາ ແລະ ຜະລິດຕະພັນການແພດ ທີ່ບໍ່ໄດ້ຂຶ້ນທະບຽນຖືກຕ້ອງ, ຢາບໍ່ມີສະຫຼາກ ມາບໍລິການປິ່ນປົວໃນຫ້ອງກວດພະຍາດເອກະຊົນ, ໂຮງໝໍເອກະຊົນ ຖ້າກວດພົບໃຫ້ແນະນຳ-ກ່າວເຕືອນ ພ້ອມ ເຮັດບົດບັນທຶກໄວ້, ຖ້າກວດພົບຄັ້ງຕໍ່ໄປ ແມ່ນໃຫ້ຍຶດຢາ ແລະ ອຸປະກອນໄວ້ເປັນຫຼັກຖານ, ແລ້ວດຳເນີນການຕາມລະບຽບກົດໝາຍ.

6. ກໍລະນີພົບເຫັນ ການໂອນ ຫຼື ເຊົ່າໃບອະນຸຍາດວິຊາຊີບເພສັດຊະກຳໃຫ້ຜູ້ອື່ນນຳໃຊ້ ໃຫ້ປະຕິບັດມາດຕະການ ສຶກສາ ອົບຮົມ ແລະ ເຮັດບັນທຶກໄວ້, ຖ້າພົບເຫັນຄັ້ງຕໍ່ໄປ ໃຫ້ປິດກິດຈະການ ຖາວອນ.

7. ສຳລັບຜູ້ດຳເນີນທຸລະກິດ ດ້ານຢາ ແລະ ຜະລິດຕະພັນການແພດ ບໍ່ໄດ້ຮັບອະນຸຍາດ ຈາກ ກະຊວງສາທາລະນະສຸກ ໃຫ້ໂຈະທຸລະກິດ ກ່ອນ ລໍຖ້າດຳເນີນຂັ້ນຕອນ ເອກະສານຖືກຕ້ອງຕາມລະບຽບກົດໝາຍ.

8. ສຳລັບຜູ້ທີ່ດຳເນີນທຸລະກິດ ຮ້ານຂາຍຢາຢູ່ໃນຕະຫຼາດ, ຢູ່ຫ້ອງກວດພະຍາດເອກະຊົນ ຫຼື ຄລີນິກ, ມີການຂາຍຢາເກີນບັນຊີຢາທີ່ຕົນໄດ້ຮັບອະນຸຍາດໃຫ້ຂາຍ, ມີການໃຊ້ສະຖານທີ່ຂາຍຢາເປັນບ່ອນກວດພະຍາດແລະປິ່ນປົວຄົນເຈັບ, ຍົກຍ້າຍສະຖານທີ່ບໍ່ໄດ້ຮັບອະນຸຍາດ ແມ່ນໃຫ້ແນະນຳ-ກ່າວເຕືອນ ພ້ອມ ເຮັດບົດບັນທຶກໄວ້ໃນປຶ້ມຕິດຕາມ ແລະ ໃຫ້ຂຽນໃບປະຕິຍານ, ຖ້າພົບຄັ້ງຕໍ່ໄປຍັງເຄື່ອນໄຫວບໍ່ຖືກຕ້ອງ ບໍ່ຕໍ່ທະບຽນວິຊາຊີບເພສັດຊະກຳ ແລະ ສັ່ງປິດກິດຈະການ ທັນທີ.

9. ສຳລັບຜູ້ດຳເນີນການຜະລິດ, ນຳເຂົ້າ ແລະ ຈຳໜ່າຍຢາ ບໍ່ໄດ້ຮັບອະນຸຍາດ ແລະ ບໍ່ໄດ້ຂຶ້ນທະບຽນ ນຳ ກະຊວງສາທາລະນະສຸກ ຖ້າພົບເຫັນໃຫ້ຍຶດຜະລິດຕະພັນ ແລະ ແນະນຳ-ກ່າວເຕືອນ; ຖ້າພົບເຫັນຄັ້ງຕໍ່ໄປໃຫ້ຍຶດຜະລິດຕະພັນ ແລະ ປັບໄໝ 100% ຂອງມູນຄ່າຢາທີ່ຈຳໜ່າຍໃນທ້ອງຕະຫຼາດຕໍ່ນຶ່ງລາຍການ ແລະ ສັ່ງປິດກິດຈະການ 01 ປີ, ຖ້າຍັງບໍ່ຢຸດເຊົາໃຫ້ຍຶດຜະລິດຕະພັນ ແລະ ປັບໄໝ 200% ຂອງມູນຄ່າຢາທີ່ຈຳໜ່າຍໃນທ້ອງຕະຫຼາດ ແລະ ປິດກິດຈະການຢ່າງຖາວອນ.

10. ກໍລະນີພົບເຫັນການເຜີຍແຜ່ ແລະ ໂຄສະນາ ຜະລິດຕະພັນ ອາຫານ ຫຼື ອາຫານເສີມ ລວມທັງ ຜະລິດຕະພັນເສີມສຸຂະພາບ ແລະ ເຄື່ອງສຳອາງ ທີ່ກ່າວອ້າງເຖິງສັບພະຄຸນໃນການປິ່ນປົວພະຍາດ ທັງພາກລັດ ແລະ ເອກະຊົນ ໃຫ້ແນະນຳ-ກ່າວເຕືອນ ແລະ ສຶກສາອົບຮົມ ພ້ອມ ເຮັດບົດບັນທຶກ ແລະ ຂຽນໃບປະຕິຍານ; ຖ້າພົບເຫັນຄັ້ງຕໍ່ໄປໃຫ້ປັບໄໝ 1,500,000 ກີບ ແລະ ຍັງສືບຕໍ່ກະທຳຜິດອີກ ໃຫ້ປັບໄໝ 3,000,000 ກີບ ແລະ ໃຫ້ຖອນໃບທະບຽນ ຫຼື ຈົດແຈ້ງຜະລິດຕະພັນ ຖ້າຮ້າຍແຮງຈະຖືກປະຕິບັດຕາມລະບຽບກົດໝາຍ.

11. ມອບໃຫ້ພະແນກສາທາລະນະສຸກ ແຂວງ, ນະຄອນຫຼວງ ເຜີຍແຜ່-ເຊື່ອມຊຶມ ກົດໝາຍວ່າດ້ວຍການປິ່ນປົວ, ກົດໝາຍວ່າດ້ວຍຢາ ແລະ ຜະລິດຕະພັນການແພດ ໃຫ້ພະນັກງານແພດໝໍ ແລະ ການຢາ ຢ່າງໜ້ອຍ 02 ຄັ້ງຕໍ່ປີ.

12. ການລົງກວດກາການດຳເນີນທຸລະກິດຂອງຫ້ອງກວດພະຍາດເອກະຊົນ, ໂຮງໝໍເອກະຊົນ, ໂຮງງານຜະລິດຢາ ແລະ ຮ້ານຂາຍຢາອຸປະກອນການແພດ, ສະເໜີໃຫ້ປະຕິບັດສຳເລັດກ່ອນ ວັນທີ 15/03/2018 ແລ້ວ ລາຍງານເປັນລາຍລັກອັກສອນ ໃຫ້ການນຳກະຊວງສາທາລະນະສຸກ ຮັບຊາບ.

ດັ່ງນັ້ນ, ຈຶ່ງແຈ້ງມາຍັງທ່ານຮັບຊາບ ແລະ ປະຕິບັດຕາມລະບຽບການດ້ວຍ.

**ລັດຖະມົນຕີ**

**ບ່ອນນຳສົ່ງ :**

-ພະແນກສາທາລະນະສຸກແຂວງ,ນະຄອນຫຼວງ ບ່ອນລະ 01 ສະບັບ

-ກົມປິ່ນປົວແລະຟື້ນຟູໜ້າທີ່ການ 01 ສະບັບ

-ກົມອາຫານແລະຢາ 01 ສະບັບ

-ສຳນັກງານກະຊວງສາທາລະນະສຸກ 01 ສະບັບ.

ຮສ ດຣ. ບຸນກອງ ສີຫາວົງ